**ບົດກ່າວເປີດ**
**ຂອງ ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**
**ຕໍ່ກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ ຂອງ ສປປ ລາວ**
**ທີ່ນະຄອນຫຼວງວຽງຈັນ, ວັນທີ 25 ພຶດສະພາ 2023**

**-----------------------------------------------------------------------**

ຮຽນ:
- ທ່ານ ດານີແອວ ດູນລິດສກີ ຜູ້ອຳນວຍການຂະແໜງການພັດທະນາຊັບພະຍາກອນມະນຸດ ປະຈຳພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ຂອງທະນາຄານໂລກ.
- ທ່ານ ນາງ ດຣ ເພຍ ເຣເບີໂລ ບຣິດໂຕ, ຫົວໜ້າ ອົງການຢູນິເຊັບ ປະຈຳ ສ ປປ ລາວ
- ທ່ານ ນາງ ມາຣຽມ ເຊີມານ, ຜູ້ອຳນວຍການຫ້ອງການທະນາຄານໂລກ ປະຈຳປະເທດ ກຳປູເຈຍ, ລາວ ແລະ ພະມ້າ ທີ່ນັບຖື
- ບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ ທີ່ນັບຖື
- ບັນດາທ່ານ ເອກອັກຄະລັດຖະທູດ ປະເທດເພື່ອນມິດ ປະຈຳ ສປປ ລາວ ທີ່ນັບຖື
- ບັນດາທ່ານ ເຈົ້າແຂວງ, ຮອງເຈົ້າແຂວງ ທີ່ນັບຖື
- ບັນດາທ່ານ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ທີ່ນັບຖື
- ບັນດາທ່ານ ແຂກຜູ້ມີກຽດ, ທ່ານຍິງ ແລະ ທ່ານຊາຍ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ທີ່ນັບຖື ແລະ ຮັກແພງທັງຫລາຍ

ຂ້າພະເຈົ້າ ມີຄວາມຮູ້ສຶກຍິນດີ ແລະ ເປັນກຽດຢ່າງສູງ ທີ່ໄດ້ເປັນປະທານ ກອງປະຊຸມສຸດຍອດ ວ່າດ້ວຍ ຊັບສິນດ້ານມະນຸດ ຮ່ວມກັບ ທະນາຄານໂລກ ແລະ ອົງການ ຢູນິເຊບ ປະຈຳ ສປປ ລາວ ເຊິ່ງຈັດຂຶ້ນເປັນຄັ້ງທຳອິດ ຢູ່ ສປປ ລາວ ໃນມື້ນີ້.

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ!

ກອງປະຊຸມສຸດຍອດໃນມື້ນີ້ ໄດ້ຈັດຂຶ້ນໃນທ່າມກາງທີ່ ສປປ ລາວ ກຳລັງຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ທີ່ຕິດພັນກັບການຈັດຕັ້ງປະຕິບັດສອງວາລະ ແຫ່ງຊາດ ແລະ ເປັນກອງປະຊຸມສຸດຍອດທີ່ມີຄວາມສຳຄັນຢ່າງຍິ່ງ ເຊິ່ງພວກເຮົາຈະໄດ້ພ້ອມກັນ ປຶກສາຫາລື ແລະ ແລກປ່ຽນ ຄຳຄິດຄຳເຫັນ ກ່ຽວກັບການພັດທະນາຊັບສິນດ້ານມະນຸດ ໃນໄລຍະຜ່ານ ມາ ແລະ ຊອກຫາທິດທາງ, ວິທີການ ແລະ ມາດຕະການ ເພື່ອປັບປຸງໃນຕໍ່ໜ້າ ໂດຍການມີສ່ວນຮ່ວມ ຂອງທຸກພາກສ່ວນໃນສັງຄົມ ລວມທັງການສະໜັບສະໜູນຊ່ວຍເຫລືອ ຈາກສາກົນ ແລະ ຄູ່ຮ່ວມ ພັດທະນາຕ່າງໆ ໃນຫຼາຍດ້ານ ເປັນຕົ້ນ: ດ້ານເສດຖະກິດ, ດ້ານການສຶກສາ, ດ້ານການພັດທະນາ ຊັບພະຍາກອນມະນຸດ, ດ້ານວັດທະນະທຳ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ອື່ນໆ.

ກ່ອນອື່ນໝົດ ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບັນດາກະຊວງ, ອົງການ ລັດທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ, ບັນດາຄູ່ຮ່ວມພັດທະນາ ແລະ ການຈັດຕັ້ງທຸກ ພາກສ່ວນໃນສັງຄົມ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ໃນການພັດທະນາຊັບສິນດ້ານມະນຸດ ຂອງ ສປປ ລາວ ໃນໄລຍະຜ່ານມາ. ການປະກອບສ່ວນຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງ ຂອງບັນດາທ່ານ ໄດ້ເຮັດໃຫ້ ສປປ ລາວ ສາມາດຍາດໄດ້ຜົນສໍາເລັດ ແລະ ມີຄວາມຄືບໜ້າຫຼາຍດ້ານ ເປັນຕົ້ນ: ຮັກສາໄດ້ສະຖຽນ ລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການ ປັບປຸງໃຫ້ດີຂຶ້ນເທື່ອລະກ້າວ. ພ້ອມດຽວກັນນີ້, ຂ້າພະເຈົ້າຂໍຂອບໃຈມາຍັງຄູ່ຮ່ວມພັດທະນາ ແລະ ທຸກພາກສ່ວນໃນສັງຄົມ ທີ່ໄດ້ປະກອບສ່ວນ ເຂົ້າໃນການຄວບຄຸມການແຜ່ລະບາດຂອງພະຍາດໂຄ ວິດ-19 ເຊິ່ງໄດ້ເຮັດໃຫ້ພວກເຮົາສາມາດເປີດປະເທດໄດ້, ສາມາດກັບມາດໍາລົງຊີວິດແບບປົກກະຕິ, ບັນດາໂຮງຈັກໂຮງງານ ແລະ ຜູ້ປະກອບການຕ່າງໆ ໄດ້ດໍາເນີນກິດຈະການຂອງຕົນຢ່າງເປັນປົກກະຕິ ເວົ້າລວມ, ເວົ້າສະເພາະ ແມ່ນສາມາດຈັດການຮຽນການສອນໃຫ້ນັກຮຽນໄດ້ກັບມາຮຽນຄືນແບບເຊິ່ງ ໜ້າ ດ້ວຍຄວາມປອດໄພ.

ບັນດາທ່ານ ທີ່ນັບຖື!

ເຖິງວ່າພວກເຮົາຈະມີຜົນສໍາເລັດ ແລະ ມີຄວາມຄືບໜ້າຫຼາຍດ້ານກໍ່ຕາມ ແຕ່ພວກເຮົາກໍຍັງມີຂໍ້ ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ພວກເຮົາໄດ້ຮັບຜົນກະທົບພໍສົມຄວນເປັນຕົ້ນທາງດ້ານເສດຖະກິດ-ການເງິນ, ການສຶກສາ, ການພັດທະນາຊັບພະຍາກອນມະນຸດ ແລະ ອື່ນໆ, ເຊິ່ງຈະຕ້ອງໄດ້ໃຊ້ເວລາພໍສົມຄວນ ເພື່ອຟື້ນຟູການ ພັດທະນາໃຫ້ສາມາດບັນລຸໄດ້ຕາມເປົ້າໝາຍການພັດທະນາຂອງປະເທດ ເວົ້າລວມ, ເວົ້າສະເພາະ ໃນ ຂົງເຂດການສຶກສາ ເຫັນວ່າ ອັດຕາການເຂົ້າຮຽນໃນທຸກຊັ້ນທຸກສາຍມີທ່າອ່ຽງຫຼຸດລົງ, ອັດຕາການ ປະລະການຮຽນເພີ່ມຂຶ້ນ, ຄຸນນະພາບການສຶກສາຫຼຸດລົງ ແລະ ອື່ນໆ. ບັນຫາດັ່ງກ່າວແມ່ນໜ້າເປັນ ຫ່ວງ ແລະ ຈະຕ້ອງໄດ້ພ້ອມກັນຊອກຫາທາງອອກ ແລະ ມາດຕະການແກ້ໄຂ.

ບັນດາທ່ານທີ່ນັບຖື, ຊັບສິນດ້ານມະນຸດ ແມ່ນປັດໄຈຕັດສິນເຮັດໃຫ້ເສດຖະກິດ-ສັງຄົມມີ ຄວາມເຂັ້ມແຂງ ແລະ ຍືນຍົງ ຕົວຢ່າງ: ໃນບາງປະເທດໃນພາກພື້ນທີ່ມີຜົນສໍາເລັດໃນການພັດທະນາ ຊັບສິນດ້ານມະນຸດ ເຊິ່ງໄດ້ປະກອບສ່ວນເຂົ້າໃນຜົນສໍາເລັດລວມຂອງການພັດທະນາປະເທດ ເຊັ່ນ: ສ. ເກົາຫຼີ, ສິງກະໂປ, ລາຊະອານາຈັກໄທ ແລະ ສສ. ຫວຽດນາມ. ສະເພາະ ສປປ ລາວ, ປະຈຸບັນ ພວກ ເຮົາຍັງພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ດັ່ງນັ້ນ ທຶນຮອນເພື່ອພັດທະນາຊັບສິນດ້ານ ມະນຸດ ຍັງມີຄວາມຈໍາກັດຫຼາຍ. ໂດຍລວມແລ້ວ, ສິ່ງທ້າທາຍໃນການຮັບປະກັນການຮຽນຮູ້ ແມ່ນມີ ຫຼາຍ ບໍ່ສະເພາະແຕ່ຢູ່ໃນ ສປປ ລາວ, ແຕ່ເກີດຂຶ້ນໃນທົ່ວໂລກ, ລວມທັງປະເທດທີ່ມີຄວາມຮັ່ງມີ.

ສະນັ້ນ, ເພື່ອໃຫ້ເດັກນ້ອຍໄດ້ຮຽນໜັງສື, ພວກເຮົາມີຄວາມຈຳເປັນທີ່ຕ້ອງມີຄູ ແລະ ມີສື່ການຮຽນການສອນທີ່ມີຄຸນນະພາບສູງ, ໂຮງຮຽນຕ້ອງມີຄວາມເປັນເຈົ້າການຢ່າງເຂັ້ມແຂງ, ມີອາຄານຮຽນທີ່ປອດໄພ ເພື່ອດຶງດູດໃຫ້ເດັກຢາກມາຮຽນ ແລະ ມີການສະໜັບສະໜູນຈາກພາກລັດ, ພາກເອກະຊົນ, ບັນດາຄູ່ຮ່ວມພັດທະນາ, ທຸກພາກສ່ວນໃນສັງຄົມ ລວມທັງ ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງ ຢ່າງເປັນເຈົ້າການ ແລະ ແຂງແຮງ.

ບັນດາທ່ານ ທີ່ຮັກແພງ!

ລັດຖະບານ ສປປ ລາວ ມີຄວາມໝາຍໝັ້ນຢ່າງເຕັມທີ່ ໃນການຮັບປະກັນການສຶກສາທີ່ມີຄຸນນະພາບ ສຳລັບເດັກນ້ອຍທຸກຄົນ ໃນ ສປປ ລາວ ເຊິ່ງໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ຄັ້ງທີ IX. ເປົ້າໝາຍລວມຂອງແຜນພັດທະນາດັ່ງກ່າວ ແມ່ນເພື່ອຮັບປະກັນວ່າ ສປປ ລາວ ມີລະບົບການສຶກສາ ທີ່ສາມາດພັດທະນາຊັບສິນດ້ານມະນຸດ ໃຫ້ມີຄວາມຮູ້ ຄວາມສາມາດ, ທັກສະດ້ານຕ່າງໆ, ມີຄຸນສົມບັດສິນທຳປະຕິວັດ, ຮັກປະເທດຊາດ, ມີລະບຽບວິໄນ, ມີສຸຂະພາບຮ່າງກາຍ ແລະ ຈິດໃຈ ທີ່ແຂງແຮງ ແລະ ຮັກການຮຽນຮູ້ຕະຫຼອດຊີວິດ, ສ້າງຄົນໃຫ້ກາຍເປັນຊັບສິນດ້ານມະນຸດທີ່ມີຄຸນນະພາບ ເພື່ອປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາ ເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງ ແລະ ຍືນຍົງ.

ບັນດາທ່ານທີ່ນັບຖື, ໃນໂອກາດກອງປະຊຸມທີ່ມີຄວາມສຳຄັນນີ້, ຂ້າພະເຈົ້າຂໍຮຽກຮ້ອງໃຫ້ທຸກພາກສ່ວນ, ທັງພາກລັດ, ເອກະຊົນ, ບັນດາຄູ່ຮ່ວມພັດທະນາ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມກັນ ໃຫ້ການຮ່ວມມື ເປັນເຈົ້າການພັດທະນາ ຊັບສິນດ້ານມະນຸດ ທາງດ້ານປະລິມານ ແລະ ຄຸນນະພາບໃຫ້ສູງຂຶ້ນກວ່າເກົ່າ. ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ພວກເຮົາຈະໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ແລະ ສ້າງສັນ ເພື່ອເຮັດໃຫ້ ການພັດທະນາຊັບສິນດ້ານມະນຸດ ມີຄຸນນະພາບ.

ສຸດທ້າຍນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງ ທະນາຄານໂລກ, ອົງການຢູນິເຊບ ທີ່ໄດ້ໃຫ້ການສະໜັບສະໜູນ ເຮັດໃຫ້ກອງປະຊຸມສຸດຍອດໄດ້ໄຂຂຶ້ນໃນມື້ນີ້. ຂໍສະແດງຄວາມຂອບໃຈມາຍັງບັນດາກະຊວງ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາ, ການຈັດຕັ້ງທຸກພາກສ່ວນ ແລະ ທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມກັບພວກເຮົາໃນຄັ້ງນີ້. ໃນໂອກາດທີ່ມີຄວາມສຳຄັນນີ້ ຂ້າພະເຈົ້າຂໍຖືເອົາ ເວທີກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ ເປັນຄວາມໝາຍໝັ້ນ ແລະ ຄວາມພະຍາຍາມຂອງພວກເຮົາໃນການພ້ອມກັນກ້າວໄປທາງໜ້າຢ່າງແຂງແຮງ ແລະ ຍືນຍົງ.

ມາຮອດນີ້ ຂ້າພະເຈົ້າຂໍກ່າວໄຂກອງປະຊຸມຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

**(ຂໍຂອບໃຈ) !**